ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອັດຕະປື ເລກທີ...06...../ຈຂອປ

ອັດຕະປື, ວັນທີ.03 ເມສາ 2024.

# ຄຳສັ່ງ

## ກ່ຽວກັບການຕິດຕາມ, ກວດກາ ແລະ ໃຊ້ມາດຕະການ ຕໍ່ຜູ້ລະເມີດການຈຳໜ່າຍ, ຊື້-ຂາຍ ສິນຄ້າເກືອດຫ້າມປະເພດຕ່າງໆພາຍໃນແຂວງອັດຕະປື

**ເຖິງ:** - ພະແນກອຸດສາຫະກຳ ແລະ ການຄ້າແຂວງ,
- ກອງບັນຊາການ ປກສ ແຂວງ;
- ພະແນກພະລັງງານ ແລະ ບໍ່ແຮ່ແຂວງ;
- ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ;
- ພະແນກກະສິກຳ ແລະ ປ່າໄມ້ແຂວງ;
- ອົງການປົກຄອງ 05 ຕົວເມືອງ.

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ໝວດທີ 4, ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- ອີງຕາມ ດຳລັດ ສະບັບເລກທີ 508/ລບ, ລົງວັນທີ 04 ທັນວາ 2012 ວ່າດ້ວຍການກວດກາການຄ້າ.

## ເຈົ້າແຂວງ ອອກຄຳສັ່ງ:

1. ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ອົງການປົກຄອງ 05 ຕົວເມືອງ ລົງເຄື່ອນໄຫວໂຄສະນາເຜີຍແຜ່ດຳລັດສະບັບເລກທີ 508/ລບ, ລົງວັນທີ 04 ທັນວາ 2012, ບັນດານິຕິກຳທີ່ຕິດພັນກັບຂໍ້ຫ້າມ ແລະ ມາດຕະການຕ່າງໆ ຕໍ່ຜູ້ລະເມີດ, ການຈຳໜ່າຍຊື້-ຂາຍສິນຄ້າເກືອດຫ້າມປະເພດຕ່າງໆ ພາຍໃນແຂວງອັດຕະປື ເປັນຕົ້ນ : ປະເພດເຄື່ອງດັດແປງ, ເລົາປືນແກັບ, ຈັກສະຕິນ, ໝໍ້ຊ໋ອດປາ, ໝໍ້ດູດປາ, ເຄື່ອງດູດແຮ່ທາດ, ຕະແກ້ງຮ່ອນຄຳຕຶກຂ້ອນ, ນ້ຳບາ-ນ້ຳກົດ, ໝາກກະໂພກ, ໝາກແຕກ-ທາດລະເບີດ, ຢາປາບສັດຕູພືດ, ສິນຄ້າເກືອດຫ້າມຕ່າງໆ ໃຫ້ປະຊາຊົນບັນດາເຜົ່າ, ຊາວຄ້າຂາຍ, ຜູ້ປະກອບການ, ນັກທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນທຸລະກິດ, ອາໄສຢູ່ພາຍໃນແຂວງອັດຕະປື, ເພື່ອສ້າງສະຕິ ແລະ ປູກຈິດສຳນຶກໃນການເຄົາລົບລະບຽບກົດໝາຍ ພ້ອມທັງສະກັດກັ້ນການລະເມີດລະບຽບກົດໝາຍ ແນໃສ່ສົ່ງເສີມ ແລະ ປົກປ້ອງຫົວໜ່ວຍທຸລະກິດການຄ້າ ທີ່ເຄື່ອນໄຫວຖືກຕ້ອງສອດຄ່ອງກັບລະບຽບກົດໝາຍ ແລະ ເປັນໄປຕາມກົນໄກເສດຖະກິດຕະຫຼາດທີ່ມີການຄຸ້ມຄອງຂອງລັດ;
2. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ ເປັນເຈົ້າການຮ່າງຂໍ້ຕົກລົງແຕ່ງຕັ້ງຄະນະເຈົ້າໜ້າທີ່ກວດກາການຄ້າຂັ້ນແຂວງ ໂດຍປະສານສົມທົບກັບເຈົ້າໜ້າທີ່ກວດກາການຄ້າຂັ້ນເມືອງ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ; ລົງຕິດຕາມ, ກວດກາບັນດາຫ້າງຮ້ານຕາມຕະຫຼາດ ແລະ ນອກຕະຫຼາດ, ຫ້າງຊັບພະສິນຄ້າ, ຜູ້ປະກອບ

ການ, ນັກທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ ໂດຍນຳໃຊ້ມາດຕະການຕໍ່ຜູ້ລະເມີດໃນການຈຳໜ່າຍ, ຊື້-ຂາຍສິນຄ້າ, ປະເພດເຄື່ອງດັດແປງ, ເລົາປືນແກັບ, ຈັກສະຕິນ, ໝໍ້ຊ໋ອດປາ, ໝໍ້ດູດປາ, ເຄື່ອງດູດແຮ່ທາດ, ຕະແກ້ງຮ່ອນຄຳຕຶກຂ້ອນ, ນ້ຳບາ-ນ້ຳກົດ, ໝາກກະໂພກ, ໝາກແຕກ-ທາດລະເບີດ, ຢາປາບສັດຕູພືດ ແລະ ສິນຄ້າເກືອດຫ້າມປະເພດຕ່າງໆ ຢູ່ພາຍໃນແຂວງອັດຕະປື ຢ່າງເຂັ້ມງວດ;

3. ກໍລະນີພົບເຫັນຜູ້ລະເມີດໃຫ້ປະຕິບັດຕໍ່ຜູ້ລະເມີດຕາມ ມາດຕາ 21 ວ່າດ້ວຍມາດຕະການປັບໃໝ ແລະ ມາດຕະການໂທດເພີ່ມຕາມຂໍ້ຕົກລົງ ຂອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1499/ອຄ.ກຄພນ, ລົງວັນທີ 08 ກັນຍາ 2017 ວ່າດ້ວຍການປະຕິບັດວຽກງານກວດກາການຄ້າ ດັ່ງນີ້:

3.1. ການລະເມີດຄັ້ງທີໜຶ່ງ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ເຮັດບົດບັນທຶກເປັນລາຍລັກອັກສອນ ພ້ອມທັງປັບໃໝ 70% ຂອງມູນຄ່າສິນຄ້າ, ເຄື່ອງຂອງ ພ້ອມທັງຢຶດ, ອາຍັດສິນຄ້າດັ່ງກ່າວ ແລະ ຕ້ອງປະຕິບັດພັນທະຕ່າງໆຢ່າງຄົບຖ້ວນຕາມລະບຽບກົດໝາຍ;

3.2. ເຈດຕະນາລະເມີດ ຫຼື ເປັນຄັ້ງທີສອງ ແມ່ນຈະຖືກປັບໃໝ 100% ຂອງມູນຄ່າສິນຄ້າ, ເຄື່ອງຂອງ ພ້ອມທັງຢຶດ, ອາຍັດສິນຄ້າດັ່ງກ່າວ ແລະ ຕ້ອງປະຕິບັດພັນທະຕ່າງໆຢ່າງຄົບຖ້ວນຕາມລະບຽບກົດໝາຍ;

3.3. ກໍລະນີລະເມີດຊ້ຳ ( ການກະທຳເປັນອາຈິນ ) ໃຫ້ປັບໃໝສອງເທົ່າຂອງມູນຄ່າປັບໃໝຄັ້ງສຸດທ້າຍ, ພ້ອມທັງໂຈະ ແລະ ຖອນໃບທະບຽນວິສາຫະກິດ ( ສຳລັບບຸກຄົນ ຫຼື ນິຕິບຸກຄົນ ທີ່ກະທຳຜິດ ແມ່ນມອບໃຫ້ກຳລັງ ປກຊ ແຂວງ, ປກສ ແຂວງ ເປັນຜູ້ປະຕິບັດມາດຕະການຕາມລະບຽບກົດໝາຍອາງອອກຢ່າງເຂັ້ມງວດ ).

4. ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ກອງບັນຊາການ ປກສ ແຂວງ, ປກຊ ແຂວງ, ພະແນກພະລັງງານ ແລະ ບໍ່ແຮ່ແຂວງ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ອົງການປົກຄອງ 05 ຕົວເມືອງ, ພາກສ່ວນທີ່ກ່ຽວຂ້ອງ ຂັ້ນແຂວງ ແລະ ຂັ້ນເມືອງ ( ເຈົ້າໜ້າທີ່ກວດກາການຄ້າ ), ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ຢ່າງເຂັ້ມງວດ ແລະ ໃຫ້ມີປະສິດທິຜົນສູງ, ແລ້ວສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດໃຫ້ການນຳຂັ້ນແຂວງຮັບຊາບຢ່າງເປັນປົກກະຕິ.

5. ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງ

ພົທ ວັນທອງ ກອງມະນີ

ບ່ອນນຳສົ່ງ:

- ພະແນກອຸດສາຫະກຳ ແລະ ການຄ້າແຂວງ 01 ສະບັບ;
- ຫ້ອງວ່າການແຂວງ 01 ສະບັບ;
- ກອງບັນຊາການ ປກສ ແຂວງ 01 ສະບັບ;
- ພະແນກພະລັງງານ ແລະ ບໍ່ແຮ່ແຂວງ 01 ສະບັບ;
- ພະແນກຊັບພະຍາກອນທຳຊາດ ແລະ ສິ່ງແວດລ້ອມແຂວງ 01 ສະບັບ;
- ພະແນກກະສິກຳ ແລະ ປ່າໄມ້ແຂວງ 01 ສະບັບ;
- ອົງການປົກຄອງ 05 ຕົວເມືອງ 01 ສະບັບ;
- ອົງການປົກຄອງບ້ານໃນທົ່ວແຂວງ ບ້ານລະ 01ສະບັບ;
- ເກັບຮັກສາໄວ້ 01 ສະບັບ.